ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ 5430 --

ຫ້ອງການ ເລກທີ /ຫກ

ນະຄອນຫຼວງວຽງຈັນ, ວັນທີ 01 ຕຸລາ 2024

## ໜັງສືແຈ້ງເຊີນປະມູນ

1. ກະຊວງສຶກສາທິການ ແລະ ກິລາ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ທີ່ມີຄຸນນະວຸດທິເໝາະສົມ ເຂົ້າຍື່ນຊອງປະມູນ ສໍາລັບການຈັດຊື້ປີ້ຍົນ ເພື່ອສະໜອງໃຫ້ຄະນະນໍາ, ຄູຝຶກ, ກອງເລຂາ ແລະ ນັກກິລາທີມຊາດລາວເຂົ້າຮ່ວມແຂ່ງຂັນກິລາຄົນພິການທຸໜວກອາຊ້ຽນ ຄັ້ງທີ II, ທີ່ ນະຄອນຫຼວງຈາກາກະຕ້າ ປະເທດ ອິນໂດເນເຊຍ ໄລຍະການຈັດຕັ້ງປະຕິບັດແມ່ນໃຫ້ທັນເວລາໃນການເດີນທາງ;
2. ການປະມູນຈະດໍາເນີນຕາມຂັ້ນຕອນ ການປະມູນເປີດກ້ວາງພາຍໃນປະເທດ ທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງ ປະຕິບັດກົດໝາຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດ ທີ່ມີຄຸນນະວຸດທິເໝາະສົມ;
4. ບໍລິສັດ ທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ກວດເບິ່ງເອກະສານປະມູນໄດ້ທີ່ ພະແນກຄຸ້ມຄອງຊັບສິນຂອງລັດ, ກົມການເງິນ, ກະຊວງສຶກສາທິການ ແລະ ກິລາ ໂທລະສັບ/ແຟັກ: 021 252 994, 020 2222 3244 ຕາມວັນເວລາ ລັດຖະການ;
5. ເອກະສານປະມູນຄົບຊຸດທີ່ເປັນພາສາລາວສາມາດຊື້ໄດ້ໂດຍຜູ້ປະມູນທີ່ສົນໃຈໂດຍການຍື່ນຫນັງສືສະເຫນີຫາ ຫຼື ສາມາດສອບຖາມລາຍລະອຽດໄດ້ທີ່ ພະແນກຄຸ້ມຄອງຊັບສິນຂອງລັດ, ກົມການເງິນ, ກະຊວງສຶກສາທິການ ແລະ ກິລາ, ຖະໜົນເລກ1 ລ້ານຊ້າງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ໂທລະສັບ/ແຟັກ: 021 252 994, ເລີ່ມແຕ່ວັນທີ 01 ຕຸລາ 2024 ຕາມວັນເວລາ ລັດຖະການ, ໃນລາຄາຊຸດລະ 500.000 ກີບ; ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ;
6. ຊອງປະມູນຕ້ອງສົ່ງທີ່ຫ້ອງປະຊຸມ 425 ກະຊວງສຶກສາທິການ ແລະ ກິລາ ກ່ອນເວລາ 10:00 ໂມງ ຂອງວັນທີ 08 ພະຈິກ 2024. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ອະນຸຍາດ, ຊອງປະມູນທີ່ສົ່ງຊ້າກ່ອນເວລາທີ່ກໍານົດໄວ້ ຈະບໍ່ຮັບເອກສານປະມູນ ແລະ ສົ່ງຄືນ ໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 10:00 ໂມງ ຂອງວັນທີ 08 ພະຈິກ 2024 ໂດຍຊ່ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນໍາ;
7. ທຸກໆຊອງປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນດ້ວຍກຽດ ຫຼື ໜັງສືຄໍ້າປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າການຄໍ້າປະກັນບໍ່ໃຫ້ຫຼຸດ 2% (ສ່ວນຮ້ອຍ) ຂອງລາຄາປະມູນ ມາພ້ອມ.

ຫົວໜ້າຫ້ອງການ

ນ. ດາລາວອນ ກິດຕິພັນ

สแกนด้วย CamScanner